VIENTIANE CENTER
ວຽງຈັນເຊັ້ນເຕີ
ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ບົດລາຍງານການເຄື່ອນໄຫວທຸລະກິດ
6 ເດືອນຕົ້ນປີ 2026
ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

1. ຂໍ້ມູນກ່ຽວກັບບໍລິສັດ

1.1 ວິໄສທັດ

ວຈຊຕ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງການເງິນ ແລະ ສູນກາງການວາງສະແດງຂອງປະເທດລາວ.

1.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

1.3 ແນະນຳບໍລິສັດ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອຈຳກັດ ທີ່ຮ່ວມກັນສ້າງຕັ້ງຂຶ້ນລະຫວ່າງກຸ່ມບໍລິສັດກໍ່ສ້າງລົງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈຳກັດ.ບໍລິສັດໄດ້ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019(ຊື່ລະຫັດຫຼັກຊັບ“VCL”).

ຂອບເຂດການດຳເນີນທຸລະກິດຂອງ ແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ ແລະ ຂາຍ, ຊຶ່ງປະກອບດ້ວຍ ການໃຫ້ເຊົ່າ ແລະ ຂາຍຮ້ານຄ້າ, ການໃຫ້ເຊົ່າ ແລະ ຂາຍອາຄານຫ້ອງການ, ການໃຫ້ເຊົ່າສະຖານທີ່ຈັດກິດຈະກຳ ແລະ ການຮ່ວມທຸລະກິດເປັນຕົ້ນ, ໂດຍຜ່ານການສ້າງເປັນແບຣນຂອງຕົນ ເພີ່ມປະສິດທິພາບໃນວຽກງານການບໍລິການ ປັບປຸງຮູບແບບການດຳເນີນທຸລະກິດ, ສູນການຄ້າ ແລະ ສຳນັກງານຫ້ອງການ ເຊິ່ງໄດ້ດຶງດູດທຸລະກິດທີ່ມີຊື່ສຽງເຊັ່ນ: ທະນາຄານແຫ່ງ ສປ ຈີນ, ຮ້ານມິນິໂຊ, ໂຮງໜັງ MAJOR ແລະ ບັນດາບໍລິສັດຂ້າມຊາດຂະໜາດໃຫຍ່ ເຊັ່ນ: ບໍລິສັດໄຟຟ້າເກົ່າຫຼີ, ບໍລິສັດ ປະກັນຊີວິດພຣຸເດັນໂຊ,ບໍລິສັດ DKSH,ດ້າຖາງ ກຣຸບ ເຂົ້າມາຕັ້ງຢູ່ວຽງຈັນເຊັນເຕີ, ປະຈຸບັນ ວຽງຈັນເຊັນເຕີ ໄດ້ຄ່ອຍໆກາຍເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງທາງດ້ານການເງິນ ແລະ ສູນກາງການຈັດງານວາງສະແດງສິນຄ້າໃນລາວ, ເປັນແບຣນສູນການຄ້າອັນດັບໜຶ່ງຢູ່ລາວ ແລະ ຕົວແບບການຮ່ວມມື ຂອງລັດຖະບານສອງຊາດລາວ-ຈີນ.

1.4 ຂໍ້ມູນທົ່ວໄປຂອງບໍລິສັດ

1.4.1 ທີ່ຕັ້ງ

ສຳນັກງານຂອງ ວຈຊຕ ຕັ້ງຢູ່ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.

1.4.2 ຕິດຕໍ່ ແລະ ພົວພັນ

ເບີໂທ (+856-21) 228299

ແຟັກ (+856-21) 228299

ເວັບໄຊ: http://www.vcplao.com/

1.4.3 ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 10/08/2026 ແມ່ນ 147,199,900,000 ກີບ.

1.4.4 ຂໍ້ມູນກ່ຽວກັບຜູ້ຖືຮຸ້ນ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງ ວຈຊຕ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປນະວັນທີ 10 ສິງຫາ 2026 ໄດ້ແກ່:

(1) ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 95,999,200ຮຸ້ນ ເທົ່າກັບ 65.22% ຂອງຈຳນວນຮຸ້ນທັງໝົດ.

(2) ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ຈຳນວນຮຸ້ນທີ່ຖືຄອງແມ່ນ 49,110,800 ຮຸ້ນເທົ່າກັບ 33.36% ຂອງຈຳນວນຮຸ້ນທັງໝົດ.

2. ການຄົ້ນຄວ້າ ແລະ ວິເຄາະຂອງຄະນະບໍລິຫານງານ

2.1 ທຸລະກິດຫຼັກຂອງບໍລິສັດ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (“ບໍລິສັດມະຫາຊົນ”) ຖືສິດສິນຊັບຮ້ານຄ້າ ແລະ ຫ້ອງການບາງສ່ວນໃນ ສູນການຄ້າ ແລະ ທ່ອງທ່ຽວ ວຽງຈັນເຊັນເຕີ ("ສູນການຄ້າວຽງຈັນເຊັນເຕີ"). ປະຈຸບັນ, ບໍລິສັດມະຫາຊົນ ຖືຄອງເນື້ອທີ່ຮ້ານຄ້າໃນ ສູນການຄ້າວຽງຈັນເຊັນເຕີ 5,827.48 ຕາແມັດ (ລວມທັງຮ່ວມທຸລະກິດກັບໂຮງໜັງ Major Platinum Cineplex ເຊິ່ງເປັນໂຮງຮູບເງົາສາກົນທຳອິດໃນລາວ); ຖືຄອງເນື້ອທີ່ອາຄານຫ້ອງການ 5,105.33 ຕາແມັດ, ເນື້ອທີ່ຈັດກິດຈະກຳ 591.62 ຕາແມັດ, ລວມເນື້ອທີ່ທັງໝົດ 11,524.43 ຕາແມັດ.

ທຸລະກິດຫຼັກຂອງບໍລິສັດປະກອບດ້ວຍ ການໃຫ້ເຊົ່າ ແລະ ຂາຍຮ້ານຄ້າ, ການໃຫ້ເຊົ່າ ແລະ ຂາຍອາຄານຫ້ອງການ, ການໃຫ້ເຊົ່າສະຖານທີ່ຈັດກິດຈະກຳ ແລະ ການຮ່ວມທຸລະກິດ.

2.2 ການດຳເນີນທຸລະກິດທີ່ສຳຄັນຂອງບໍລິສັດ

ໃນດ້ານການຊອກຫາລູກຄ້າເຂົ້າມາລົງທຶນໃນໂຊນຫ້າງ, ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຍຶດໝັ້ນຫຼັກການ

“ເພີ່ມອັດຕາການໃຫ້ເຊົ່າ ຄຽງຄູ່ກັບການເພີ່ມຜົນຕອບແທນຂອງສິນຊັບ”ໂດຍນຳໃຊ້ຍຸດທະສາດການໃຫ້ເຊົ່າທີ່ຫຼາກຫຼາຍ ຕາມສະພາບການດຳເນີນງານຂອງຮ້ານຄ້າ, ອິດທິພົນຂອງແບຣນ ແລະ ທ່າອ່ຽງຂອງຕະຫຼາດ. ສຳລັບຮ້ານຄ້າທີ່ມີຄຸນນະພາບດີ, ການດຳເນີນງານສະໝ່ຳສະເໝີ ແລະ ມີອິດທິພົນແບຣນສູງ ແມ່ນຊຸກຍູ້ໃຫ້ເຊັນສັນຍາເຊົ່າໄລຍະກາງ ຫາ ໄລຍະຍາວ; ສຳລັບຮ້ານຄ້າທີ່ມີປະສິດທິພາບຕ່ຳ ແລະ ມີພື້ນທີ່ປັບປຸງຫຼາຍ ຈະນຳໃຊ້ຮູບແບບການໃຫ້ເຊົ່າໄລຍະສັ້ນ ເພື່ອເປີດໂອກາດໃນການປັບປຸງຮູບແບບທຸລະກິດໃນອະນາຄົດ.

ໃນສ່ວນການຈັດກິດຈະກຳຂອງສູນການຄ້າ, ສູນການຄ້າວຽງຈັນເຊັນເຕີ ໄດ້ຈັດກິດຈະກຳຂະໜາດກາງ ແລະ ຂະໜາດໃຫຍ່ ລວມທັງໝົດ 25 ຄັ້ງ, ກວມເອົາຫຼາຍຂົງເຂດເຊັ່ນ: ການເງິນ, ຄອບຄົວ ແລະ ເດັກນ້ອຍ, ເຕັກໂນໂລຊີ, ກາເຟ, ສິ່ງແວດລ້ອມ, ງານນິທັດສະການສາກົນ, ຜົນສຳເລັດທາງດ້ານອຸດສາຫະກຳ ແລະ ງານສະຫຼອງເທດສະການຕ່າງໆ; ເຊິ່ງລວມມີ ງານຈີກສະຫຼາກຂອງທະນາຄານພັດທະນາລາວ, ງານຂອງໂຮງຮຽນPIS Fun Family Carnival, ງານແຂ່ງຂັນຫຸ່ນຍົນເຍົາວະຊົນລາວ, ງານແຂ່ງຂັນເມັດກາເຟຄຸນນະພາບດີຂອງລາວ, ງານນິທັດສະການສິນລະປະການປ່ຽນຂີ້ເຫຍື້ອໃຫ້ເປັນຂອງມີຄ່າ, ງານວາງສະແດງວິຖີຊີວິດສາກົນນະຄອນຫຼວງວຽງຈັນ, ງານວາງສະແດງຜົນງານການປູກພືດທົດແທນ ແຂວງຢຸນນານ ແລະ ງານມະຫາກຳພັດທະນາຍົກກາລະດັບອຸດສາຫະກຳ, ກິດຈະກຳວັນເດັກນ້ອຍ 1 ມິຖຸນາ ແລະ ອື່ນໆ. ນອກຈາກນີ້, ທີມງານຄຸ້ມຄອງບໍລິຫານສູນການຄ້າ ຍັງໄດ້ວາງແຜນ ແລະ ດຳເນີນການຈັດງານສຳຄັນ 2 ງານເຊັ່ນ: ງານເປີດຕົວຜະລິດຕະພັນໃໝ່ລິດຈັກ GPX ແລະ ງານເປີດຕົວບໍລິສັດ ZTE, ເຊິ່ງໄດ້ຊ່ວຍເພີ່ມຄວາມນິຍົມ ແລະ ອິດທິພົນຂອງແບຣນສູນການຄ້າຢ່າງມີປະສິດທິພາບ. ສ່ວນການຮ່ວມທຸລະກິດ ໂຮງໜັງ Major ໄດ້ຈັດກິດຈະກຳພິເສດ ເຊັ່ນ: ສັບປະດາຮູບເງົາ ສະຫຼອງວັນສ້າງສາຍສຳພັນທາງການທູດ ຈີນ-ລາວ ຄົບຮອບ 65 ປີ ແລະ “ປີມິດຕະພາບ ຈີນ-ລາວ”, ງານເທດສະການຮູບເງົາຍີ່ປຸ່ນ, ພ້ອມທັງໄດ້ປະສານງານກັບສະຖານທູດຣັດເຊຍ, ສະຖານທູດອິນເດຍ ປະຈຳ ລາວ ແລະ ອົງການການທູດອື່ນໆ ຈັດກິດຈະກຳວັດທະນະທຳ ທີ່ມີເອກະລັກ. ໂຮງຮູບເງົາໄດ້ເພີ່ມການສາຍຮູບເງົາຢ່າງຕໍ່ເນື່ອງ, ນຳເຂົ້າຮູບເງົາຍອດນິຍົມຫຼາຍເລື່ອງ ເພື່ອເພີ່ມຄວາມສາມາດໃນການດຶງດູດລູກຄ້າຂອງສູນການຄ້າ.

ໃນດ້ານໃນດ້ານການຊອກຫາລູກຄ້າເຂົ້າມາລົງທຶນໃນອາຄານຫ້ອງການ, ໄດ້ສືບຕໍ່ຂະຫຍາຍຖານລູກຄ້າ, ປະສານງານຢ່າງຕັ້ງໜ້າກັບ ວິສາຫະກິດຈີນ, ອົງການບໍລິການສາກົນ, ເຕັກໂນໂລຊີການເງິນ, ສູນສຶກສາ ແລະ ສູນຝຶກອົບຮົມເປັນຕົ້ນ, ເພື່ອປັບປຸງໂຄງສ້າງລູກຄ້າຂອງອາຄານຫ້ອງການໃຫ້ຫຼາກຫຼາຍຍິ່ງຂຶ້ນ.

2.3 ຂໍ້ມູນທາງດ້ານການເງິນທີ່ສຳຄັນໃນໄລຍະຫົກເດືອນຕົ້ນປີ 2026

2.3.1 ລາຍຮັບ

ຮອດວັນທີ 30 ມິຖຸນາ 2026, ບໍລິສັດບັນລຸລາຍຮັບທັງໝົດ 11,227,605,892.00 ກີບ, ທຽບໃສ່ໄລຍະດຽວກັນຂອງປີ 2025 ແມ່ນຫຼຸດລົງ 6.82%. ໃນນັ້ນ, ລາຍຮັບຄ່າເຊົ່າຮ້ານ 3,846,756,727.00 ກີບ, ລາຍຮັບຄ່າເຊົ່າຫ້ອງການ 5,983,107,170.0 ກີບ, ລາຍຮັບການຮ່ວມທຸລະກິດ 1,023,335,070.0 ກີບ, ລາຍຮັບຄ່າເຊົ່າສະຖານທີ່ຈັດງານ 362,443,009.00 ກີບ, ລາຍຮັບອື່ນໆ 11,963,916.00 ກີບ.

ສາເຫດທີ່ລາຍຮັບການດຳເນີນງານຂອງບໍລິສັດຫຼຸດລົງ ໃນເຄິ່ງປີທຳອິດປະຈຳປີ 2026: **ປະການໜຶ່ງ** ດ້ານສະພາບແວດລ້ອມເສດຖະກິດມະຫາພາກ ໃນປີ 2026, ການເຕີບໂຕທາງເສດຖະກິດຂອງລາວໄດ້ຊະລໍຕົວລົງ, ອັດຕາເງິນເຟີ້ໄດ້ເພີ່ມຂຶ້ນອີກຄັ້ງເກືອບ 10.2% ໃນເດືອນເມສາ, ເຊິ່ງໄດ້ສົ່ງຜົນກະທົບຢ່າງຮຸນແຮງຕໍ່ກຳລັງຊື້ຂອງຄົວເຮືອນ, ເຮັດໃຫ້ການໃຊ້ຈ່າຍຫຼຸດລົງຢ່າງຮ້າຍແຮງ. ການເພີ່ມຂຶ້ນຂອງລາຄານ້ຳມັນໄດ້ຊຸກຍູ້ໃຫ້ຄ່າເດີນທາງ, ຄ່າຂົນສົ່ງ ແລະ ຕົ້ນທຶນສິນຄ້າເພີ່ມຂຶ້ນ, ເຊິ່ງຍິ່ງເພີ່ມແຮງກົດດັນລາຍຮັບທີ່ສາມາດໃຊ້ຈ່າຍໄດ້ຂອງຜູ້ບໍລິໂພກ. **ປະການສອງ** ດ້ານການແຂ່ງຂັນໃນຕະຫຼາດ ສູນການຄ້າວຽງຈັນເຊັນເຕີ ຕ້ອງປະເຊີນກັບການແຂ່ງຂັນທີ່ຮຸນແຮງຂຶ້ນ ນັກລົງທຶນຈາກຕ່າງປະເທດໄດ້ເລັ່ງລັດສ້າງສູນການຄ້າທີ່ທັນສະໄໝໃນທ້ອງຖິ່ນຫລາຍຂຶ້ນ, ເຮັດໃຫ້ອັດຕາການໄຫຼວຽນຂອງລູກຄ້າ ແລະ ລູກຄ້າເຊົ່າຂອງສູນການຄ້າຫຼຸດລົງ. ໃນເວລາເວລາດຽວກັນ ການຂະຫຍາຍຕົວຂອງຊ່ອງທາງການຊື້ເຄື່ອງອອນໄລນ໌ ໄດ້ຊຸກຍູ້ໃຫ້ຜູ້ບໍລິໂພກຫັນໄປໃຊ້ບໍລິການອອນໄລນ໌ຫຼາຍຂຶ້ນ, ເຮັດໃຫ້ຄວາມດຶງດູດຂອງສະຖານທີ່ການຄ້າແບບມີໜ້າຮ້ານຫຼຸດລົງຢ່າງຕໍ່ເນື່ອງ.

2.3.2 ກຳໄລ ແລະ ຂາດທຶນ

ຮອດວັນທີ 30 ມິຖຸນາ 2025, ຄ່າໃຊ້ຈ່າຍໃນການດຳເນີນງານຂອງບໍລິສັດແມ່ນ 6,370,738,720.00 ກີບ, ທຽບໃສ່ໄລຍະດຽວກັນປີ 2025 ຫຼຸດລົງ 26.53%, ສາເຫດຫຼັກແມ່ນ: **ປະການໜຶ່ງ** ແມ່ນຕົ້ນທຶນການບຳລຸງຮັກສາ ແລະ ສ້ອມແປງທີ່ເພີ່ມຂຶ້ນຈາກການເກົ່າແກ່ຂອງສູນການຄ້າ. ເມື່ອອາຍຸການດຳເນີນງານຂອງສູນການຄ້າເພີ່ມຂຶ້ນ, ໂຄງສ້າງອາຄານ, ອຸປະກອນໄຟຟ້າ-ກົນຈັກ ແລະ ສະຖານທີ່ສາທາລະນະ ລ້ວນແຕ່ເຂົ້າສູ່ໄລຍະການບຳລຸງຮັກສາ ແລະ ປ່ຽນແທນທີ່ຖີ່ຂຶ້ນ, ການສ້ອມແປງທີ່ຈຳເປັນ, ການລົງທຶນໃນການທົດແທນອຸປະກອນ ແລະ ການຍົກລະດັບໜ້າທີ່ການໃຊ້ງານໄດ້ເພີ່ມຂຶ້ນໃນແຕ່ລະປີ, ເຊິ່ງສົ່ງຜົນໂດຍກົງໃຫ້ຕົ້ນທຶນໃນໄລຍະການບຳລຸງຮັກສາເພີ່ມຂຶ້ນ. **ປະການສອງ** ສະພາບແວດລ້ອມຕົ້ນທຶນມະຫາພາກທ້ຖອຍຢ່າງຮຸນແຮງ. ໃນຕົ້ນປີ 2026, ລາຄານ້ຳມັນດິບທົ່ວໂລກໄດ້ເພີ່ມຂຶ້ນຢ່າງຮຸນແຮງຍ້ອນຄວາມຂັດແຍ່ງໃນຕາເວັນອອກກາງ, ລາຄານ້ຳມັນໃນລາວໄດ້ເພີ່ມຂຶ້ນເກືອບ 3 ເທົ່າ ໃນລະຫວ່າງປາຍເດືອນກຸມພາ ຫາ ຕົ້ນເດືອນເມສາ.

ການເພີ່ມຂຶ້ນຂອງລາຄານ້ຳມັນໄດ້ຊຸກຍູ້ໃຫ້ຕົ້ນທຶນການຂົນສົ່ງ ແລະ ລາຄາວັດສະດຸກໍ່ສ້າງເພີ່ມຂຶ້ນໂດຍກົງ, ແຜ່ກະຈາຍໄປສູ່ທຸກໆຂັ້ນຕອນຂອງການດຳເນີນງານ; ໃນເດືອນເມສາ 2026, ອັດຕາເງິນເຟີ້ສູງເຖິງ 10.2%, ເຊິ່ງເປັນຄັ້ງທຳອິດໃນຮອບ 12 ເດືອນທີ່ກັບມາເປັນຕົວເລກສອງຫຼັກ. **ປະການສາມ** ເພື່ອຍົກລະດັບປະສົບການຂອງລູກຄ້າ ແລະ ຮັກສາລູກຄ້າເຊົ່າທີ່ມີຄຸນນະພາບ, ບໍລິສັດໄດ້ສ້າງປ້າຍໂຄສະນາ ແລະ ໃຫ້ບໍລິການສະຖານທີ່ຈອດລົດ ສຳລັບລູກຄ້າຫຼັກຂອງ ທະນາຄານຈີນ. ແຕ່ການລົງທຶນນີ້ ເຖິງວ່າຈະຊ່ວຍໃຫ້ຄວາມສຳພັນກັບລູກຄ່າມີຄວາມສະໜ່ຳສະເໝີ ແລະ ຮັບປະກັນການຕໍ່ສັນຍາ, ແຕ່ກໍໄດ້ເພີ່ມຕົ້ນທຶນການດຳເນີນງານໃນໄລຍະປະຈຸບັນ. ພາຍໃຕ້ສະພາບແວດລ້ອມທີ່ອັດຕາເງິນເຟີ້ສູງ, ລາຄາວັດຖຸດິບ ແລະ ຄ່າແຮງງານເພີ່ມຂຶ້ນ, ອັດຕາການເພີ່ມຂຶ້ນຂອງລາຍຈ່າຍໃນການດຳເນີນງານ ແມ່ນສູງກວ່າປີກ່ອນໆຫຼາຍ.

ຮອດວັນທີ 30 ມິຖຸນາ 2026, ກຳໄລກ່ອນຫັກອາກອນຂອງບໍລິສັດ ແມ່ນ 5,655,948,393.0 ກີບ, ອາກອນລາຍໄດ້ ແມ່ນ 1,235,680,124.0 ກີບ, ກຳໄລສຸດທິ ແມ່ນ 4,420,268,269.00 ກີບ, ຫຼຸດລົງ 49.15% ເມື່ອທຽບໃສ່ໄລຍະດຽວກັນຂອງປີ2025. ນີ້ແມ່ນຜົນກະທົບຈາກການຫຼຸດລົງຂອງລາຍຮັບ ແລະ ການເພີ່ມຂຶ້ນຂອງຕົ້ນທຶນ. ດ້ານລາຍຮັບ, ຍ້ອນການແຂ່ງຂັນໃນຕະຫຼາດທີ່ຮຸນແຮງ, ອັດຕາການໃຫ້ເຊົ່າບໍ່ເປັນໄປຕາມຄາດໝາຍຍ້ອນສູນການຄ້າມີສະພາບເຊື່ອມໂຊມຕາມອາຍຸການໃຊ້ງານ, ກຳລັງຊື້ຂອງຜູ້ບໍລິໂພກຫຼຸດລົງ, ເຮັດໃຫ້ລາຍຮັບຈາກການໃຫ້ເຊົ່າ ແລະ ການຮ່ວມທຸລະກິດຫຼຸດລົງ; ດ້ານຕົ້ນທຶນ, ການລົງທຶນໃນການສ້ອມແປງສູນການຄ້າເພີ່ມຂຶ້ນ, ຕົ້ນທຶນການດຳເນີນງານເພີ່ມຂຶ້ນຍ້ອນເງິນເຟີ້, ລາຍຈ່າຍໃນການຮັກສາລູກຄ້າ ເຊັ່ນ: ປ້າຍໂຄສະນາ ແລະ ສະຖານທີ່ຈອດລົດ ສຳລັບ ທະນາຄານຈີນ, ສິ່ງຜົນໃຫ້ຕົ້ນທຶນການດຳເນີນງານໃນໄລຍະດັ່ງກ່າວສູງຂຶ້ນ. ລາຍຮັບຫຼຸດລົງ ແລະ ຕົ້ນທຶນເພີ່ມຂຶ້ນ ຍ້ອນຜົນກະທົບຈາກ “ສ່ວນຕ່າງຂອງ” , ເຮັດໃຫ້ອັດຕາກຳໄລຂັ້ນຕົ້ນ ແລະ ອັດຕາກຳໄລສຸດທິ ຫຼຸດລົງພ້ອມກັນ. ນອກຈາກນີ້, ລາຄານ້ຳມັນທີ່ສູງຂຶ້ນໃນປີ 2026 ໄດ້ເຮັດໃຫ້ຄ່າໃຊ້ຈ່າຍດ້ານພະລັງງານ ແລະ ການຂົນສົ່ງສຳລັບການດຳເນີນງານທາງການຄ້າເພີ່ມຂຶ້ນ, ສິ່ງຜົນໃຫ້ອັດຕາກຳໄລຫຼຸດລົງຕື່ມອີກ. ພາຍໃຕ້ສະພາບແວດລ້ອມການດຳເນີນງານພາຍນອກທີ່ຊຸດໂຊມຢ່າງຕໍ່ເນື່ອງ ແລະ ບັນຫາການເຊື່ອມໂຊມຂອງສິ່ງອຳນວຍຄວາມສະດວກພາຍໃນ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງທີ່ຄວນ, ຄວາມສາມາດໃນການສ້າງກຳໄລຂອງບໍລິສັດໄດ້ຮັບຜົນກະທົບຢ່າງຫຼວງຫຼາຍ, ເຮັດໃຫ້ລະດັບກຳໄລຫຼຸດລົງຢ່າງເຫັນໄດ້ຊັດເຈນ ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ.

2.3.3 ຊັບສິນທັງໝົດ

ຮອດວັນທີ 30 ມິຖຸນາ 2026, ຊັບສິນທັງໝົດຂອງບໍລິສັດແມ່ນ 349,908,642,959.00 ກີບ,ທຽບໃສ່ໄລຍະດຽວກັນຂອງປີ 2025 ເພີ່ມຂຶ້ນ 1.46%.

ການເພີ່ມຂຶ້ນຂອງຊັບສິນ ສ່ວນໃຫຍ່ແມ່ນມາຈາກການລົງທຶນທຶນຢ່າງຕໍ່ເນື່ອງ. ເພື່ອຮັບມືກັບບັນຫາຄວາມສາມາດໃນການແຂ່ງຂັນທີ່ຫຼຸດລົງຍ້ອນສູນການຄ້າເກົ່າ, ໃນໄລຍະບົດລາຍງານ ບໍລິສັດໄດ້ສືບຕໍ່ລົງທຶນງົບປະມານຢ່າງຕໍ່ເນື່ອງ ເພື່ອສ້ອມແປງ ແລະ ປັບປຸງຍົກລະດັບການໃຊ້ງານຂອງສິ່ງອຳນວຍຄວາມສະດວກ, ລວມທັງການສ້ອມແປງອາຄານ, ການປ່ຽນແທນອຸປະກອນ, ການປັບປຸງພື້ນທີ່ສາທາລະນະ, ການສ້າງປ້າຍໂຄສະນາ ແລະ ການປັບປຸງສິ່ງອຳນວຍຄວາມສະດວກບໍລິການ ສຳລັບລູກຄ້າຫຼັກຂອງບໍລິສັດ (ເຊັ່ນ: ທະນາຄານຈີນ), ເຊິ່ງໄດ້ເພີ່ມບັນຊີຄ່າໃຊ້ຈ່າຍລໍຖ້າຕັດບັນຊີໃນໄລຍະຍາວ, ເຮັດໃຫ້ຊັບສິນທັງໝົດເພີ່ມຂຶ້ນເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ.

2.3.4 ໜີ້ສິນທັງໝົດ

ຣອດວັນທີ 30 ມິຖຸນາ 2026,ໜີ້ສິນທັງໝົດຂອງບໍລິສັດແມ່ນ 54,406,369,029.00, ທຽບໃສ່ໄລຍະດຽວກັນຂອງປີ 2025 ເພີ່ມຂຶ້ນ 2.53%.

ສາເຫດທີ່ໜີ້ສິນເພີ່ມຂຶ້ນ: **ປະການໜຶ່ງ** ລາຍຈ່າຍໃນການສ້ອມແປງ, ປັບປຸງ ແລະ ຈັດຊື້ອຸປະກອນ ຂອງສູນການຄ້າ ແລະ ອາຄານຫ້ອງການ ເພີ່ມຂຶ້ນ, ເຮັດໃຫ້ເກີດໜີ້ສິນຈາກການດຳເນີນງານ. **ປະການສອງ** ຊັບສິນຂອງບໍລິສັດສ່ວນໃຫຍ່ແມ່ນອະສັງຫາລິມະຊັບເພື່ອການລົງທຶນ, ເຊິ່ງວັດແທກດ້ວຍມູນຄ່າຍຸຕິທຳ,ສ່ວນດ່ຽງທາງດ້ານບັນຊີ ແລະ ອາກອນ ເຮັດໃຫ້ເກີດອາກອນເຍື້ນຊຳລະໜີ້ສິນ.

3. ຄວາມສ່ຽງທີ່ອາດປະເຊີນ

3.1 ດ້ານການດຳເນີນງານສູນການຄ້າ: ປະການໜຶ່ງ ພື້ນທີ່ການຄ້າ ແລະ ຈຳນວນຮ້ານຄ້າ ໃນນະຄອນຫຼວງວຽງຈັນ ເພີ່ມຂຶ້ນຢ່າງໄວວາ, ແຕ່ຄວາມຕ້ອງການ ແລະ ກຳລັງຊື້ຂອງຜູ້ບໍລິໂພກເພີ່ມຂຶ້ນບໍ່ພຽງພໍ, ເຮັດໃຫ້ພື້ນທີ່ການຄ້າມີຄວາມລົ້ນເຫຼືອ, ລູກຄ້າຮ້ານຄ້າຖືກແບ່ງແຍກແລະ ການແຂ່ງຂັນໃນການຈັດຫາຮ້ານຄ້າເພີ່ມຂຶ້ນເລື້ອຍໆ.**ປະການສອງ** ຜົນກະທົບຈາກການຊື້ເຄື່ອງອອນໄລນ໌, ຄວາມຕ້ອງການຊື້ເຄື່ອງໃນສູນການຄ້າຂອງປະຊາຊົນຫຼຸດລົງ, ປະລິມານລູກຄ້າ ແລະ ຍອດຂາຍຂອງສູນການຄ້າຕ້ອງປະເຊີນກັບຄວາມກົດດັນ, ຮ້ານຄ້າບາງສ່ວນຂາດຄວາມເຊື່ອໝັ້ນໃນການດຳເນີນທຸລະກິດ. **ປະການສາມ** ເອກະລັກຂອງສູນການຄ້າຍັງບໍ່ທັນໂດດເດັ່ນພຽງພໍ, ຂາດຮູບແບບທຸລະກິດຫຼັກໃນການດຶງດູດລູກຄ້າ, ຄວາມສາມາດໃນການແຂ່ງຂັນແບບແຕກຕ່າງຍັງຕ້ອງໄດ້ຮັບການຍົກລະດັບຕື່ມ. **ປະການສີ່** ສູນການຄ້າມີອຸປະກອນສິ່ງອຳນວຍຄວາມສະດວກເຊັ່ນ: ການລະບາຍຄວັນ, ການລະບາຍນ້ຳ ທີ່ຈຳເປັນຕ້ອງໄດ້ຮັບການປັບປຸງທາງເຕັກນິກຢ່າງຮີບດ່ວນ, ເຊິ່ງສິ່ງຜົນກະທົບຕໍ່ປະສິດທິພາບການດຳເນີນງານປະຈຳວັນ.

3.2 ດ້ານການດຳເນີນງານອາຄານຫ້ອງການ: ປະການໜຶ່ງ ອາຄານຫ້ອງການ ແລະ ໂຄງສ້າງປະສົມປະສານ ໃໝ່ໆ ໃນນະຄອນຫຼວງວຽງຈັນ ໄດ້ຖືກປ່ອຍເຂົ້າສູ່ຕະຫຼາດຢ່າງຕໍ່ເນື່ອງ, ເນື້ອທີ່ຫ້ອງການໃຫ້ເຊົ່າເພີ່ມຂຶ້ນ, ການແຂ່ງຂັນໃນ

ຕະຫຼາດຮຸນແຮງຂຶ້ນ, ຄວາມກົດດັນດ້ານລາຄາຫຼຸດລົງເພີ່ມຂຶ້ນເລື້ອຍໆ.**ປະການສອງ** ທ້ອງການວ່າງບາງສ່ວນຍັງບໍ່ທັນໄດ້ຕົກແຕ່ງ ຫຼື ມີການຈັດວາງຟັງຊັນການໃຊ້ງານຢ່າງເໝາະສົມ, ສ້າງຄວາມສົນໃຈໃຫ້ລູກຄ້າໄດ້ຕ່ຳ, ສິ່ງຜົນໃຫ້ໄລຍະເວລາການຂາຍອອກໃຊ້ເວລາຍາວນານ.

4.ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ແລະ ຄະນະກຳມະການ

4.1 ສະພາບໍລິຫານ

4.1.1 ສະມາຊິກສະພາບໍລິຫານ

ສະພາບໍລິຫານບໍລິສັດວຽງຈັນເຊັນເຕີລາວມະຫາຊົນປະກອບດ້ວຍ 11 ທ່ານ:

- ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin) ເປັນປະທານ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ເປັນຮອງປະທານ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ບູລະພາ ສັນຕິຄົງຄາ ເປັນສະມາຊິກ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ຫວັງ ເຫວີຍຄຸນ (Mr. Wang Weikun) ເປັນສະມາຊິກ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ຫຼໍ່ສ້ຽວດົ່ງ (Mr. LuoXiaodong) ເປັນສະມາຊິກ; ຈຳນວນຫຸ້ນທີ່ຖືຄອງ: 5000 ; ຄ່າຕອບແທນ: 0
- ທ່ານ ເຫຼີ່ຍ ຢ້າວຫ້າຍ(Mr. Lei Yaohai) ເປັນສະມາຊິກ; ຈຳນວນຫຸ້ນທີ່ຖືຄອງ: 4900 ; ຄ່າຕອບແທນ: 0
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ຫວາງ ຢູ (Mr.Wang Yu) ເປັນສະມາຊິກອິດສະຫຼະ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ຈໍຊິ່ງ ບິອສີເນ່ັ່ງມາ ເປັນສະມາຊິກອິດສະຫຼະ; ຈຳນວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0

4.1.2 ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

（1）ທ່ານ ເຈິ່ງ ຊຸນຫຼິນ (Mr. Zeng Chunlin)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 22/05/1983
- ພາສາ: ຈີນ,ອັງກິດ
- ຕຳແໜ່ງ: ປະທານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຢຸນນານ,ສາຂາພາສາອັງກິດ.

（2）ທ່ານ ນາງອໍລະໄທ ສັນຕິຄົງຄາ



- ສັນຊາດ: ລາວ
- ວັນເດືອນປີເກີດ: 21/01/1979
- ພາສາ: ລາວ,ໄທ
- ຕຳແໜ່ງ: ຮອງປະທານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.



（3）ທ່ານ ບຸລະພາສັນ ຕິຄົງຄາ

- ສັນຊາດ: ລາວ
- ວັນເດືອນປີເກີດ: 06/02/1967
- ພາສາ: ຈີນ,ລາວ
- ຕຳແໜ່ງ: ເປັນສະມາຊິກ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໝານຫຼີກົງ ຈີນ, ສາຂາບໍລິຫານທຸລະກິດ.

（4）ທ່ານ ຫວັ໋ງ ເຫວີຍຄຸນ(Mr. Wang Weikun)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 15/05/1984
- ພາສາ: ຈີນ,ອັງກິດ
- ຕຳແໜ່ງ:ເປັນສະມາຊິກ,ປະທານເຈົ້າໜ້າທີ່ດ້ານການບໍລິຫານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ,ລະດັບປະລິນຍາໂທຢູ່ມະຫາວິທະຍາໄລວາຊິດາ ຍີ່ປຸ່ນ, ສາຂາການພົວພັນສາກົນ.

（5）ທ່ານ ອຸ່ ຊິງຫວາ (Mr. Wu Xinghua)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 09/01/1984
- ພາສາ: ຈີນ, ອັງກິດ,ລາວ, ໄທ
- ຕຳແໜ່ງ: ເປັນສະມາຊິກ,ປະທານເຈົ້າໜ້າທີ່ດ້ານປະຕິບັດການ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສໍຊັ່ນ(AssumptionThai), ສາຂາບໍລິຫານທຸລະກິດ.

（6）ທ່ານ ຫຼໍ ສ້ຽວດົ້ງ(Mr. Luo Xiaodong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 07/03/1989
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ,ປະທານເຈົ້າໜ້າທີ່ດ້ານການເງິນ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລການເງິນ ແຂວງຢູນນານ ຈີນ, ສາຂາການເງິນ-ບັນຊີ.

（7）ທ່ານ ເຫຼີ ຢ້າວຫ້າຍ (Mr. Lei Yaohai)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 28/11/1984
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກ, ເລຂານຸການສະພາບໍລິຫານ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລຂອນແກ່ນ ປະເທດໄທ, ສາຂາບໍລິຫານທຸລະກິດ.

（8）ທ່ານ ສ່ຽວ ໂຢງ (Mr. Xiao Yong)



- ສັນຊາດ: ຈີນ
- ວັນເດືອນປີເກີດ: 02/07/1977
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ້ງ ຈີນ, ສາຂາການເງິນ.

（9）ທ່ານ ຫວາງ ຢູ (Mr.Wang Yu)



- ສັນຊາດ:ຈີນ
- ວັນເດືອນປີເກີດ: 31/01/1996
- ພາສາ: ຈີນ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລການເງິນແຂວງຢຸນນານ ສປຈີນ, ສາຂາ ກົດໝາຍທຸລະກິດ.

（10）ທ່ານ ວຽງສະຫວັນ ພັນທະລີ



- ສັນຊາດ: ລາວ
- ວັນເດືອນປີເກີດ: 25/01/1976
- ພາສາ: ລາວ, ອັງກິດ,ໄທ
- ຕຳແໜ່ງ: ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາສາຂາກົດໝາຍວ່າ ດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

（11）ທ່ານຈໍຊິ່ງ ບົວສີເນັ່ງມາ



- ສັນຊາດ:ລາວ
- ວັນເດືອນປີເກີດ: 15/12/1972
- ພາສາ: ລາວ, ອັງກິດ,ໄທ, ຈີນ
- ຕຳແໜ່ງ:ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

4.2 ຄະນະກຳມາການຂອງສະພາບໍລິຫານ

4.2.1 ຄະນະອຳນວຍການ

- ທ່ານ ຫວັ ເຫວີຍຄຸນ (Mr. Wang Weikun) ປະທານຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານການບໍລິຫານ
- ທ່ານ ອຸ ຊິງຫວາ (Mr. Wu Xinghua) ຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານປະຕິບັດການ
- ທ່ານ ຫຼໍ ສ່ຽວຕົ໋ງ (Mr. Luo Xiaodong) ຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານການເງິນ

4. 3.2. ຄະນະກຳມະການກວດສອບ

- ທ່ານ ຈໍຊິ່ງ ບົວສີເນັ່ງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການກວດສອບ
- ທ່ານ ເຈີ່ງ ຊຸນຫຼິນ (Mr. Zeng Chunlin) ສະມາຊິກ/ສະມາຊິກຄະນະກຳມະການກວດສອບ
- ທ່ານ ສ່ຽວ ໂຢ໋ງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການກວດສອບ

4.2.3 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

- ທ່ານ ວຽງສະຫວັນ ພັນທະລີ ສະມາຊິກອິດສະຫຼະ/ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ
- ທ່ານ ຈໍຊິ່ງ ບົວສີເນັ່ງມາ ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ
- ທ່ານ ຫຼໍ ສ່ຽວຕົ໋ງ (Mr. Luo Xiaodong) ສະມາຊິກ/ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ

4.2.4 ຄະນະກຳມະການຄັດເລືອກ

- ທ່ານ ຈໍຊິ່ງ ບົວສີເມັ່ງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການຄັດເລືອກ
- ທ່ານ ຫວາງ ຢູ (Mr. Wang Yu) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການຄັດເລືອກ
- ທ່ານ ບູລະພາ ສັນຕິຄົງຄາ ສະມາຊິກ/ສະມາຊິກຄະນະກຳມະການຄັດເລືອກ

4.2.5 ຄະນະກຳມະການກຳນົດຄ່າຕອບແທນ

- ທ່ານ ຫວາງ ຢູ (Mr. Wang Yu) ສະມາຊິກອິດສະຫຼະ/ປະທານຄະນະກຳມະການກຳນົດຄ່າຕອບແທນ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ສະມາຊິກ/ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ

4.2.6 ຄະນະກຳມະການລາຍການທີ່ກ່ຽວພັນ

- ທ່ານ ຈໍຊິ່ງ ບົວສີເມັ່ງມາ ສະມາຊິກອິດສະຫຼະ/ປະທານ ຄະນະກຳມະການລາຍການທີ່ກ່ຽວພັນ
- ທ່ານ ບູລະພາ ສັນຕິຄົງຄາ ສະມາຊິກ/ສະມາຊິກຄະນະກຳມະການລາຍການທີ່ກ່ຽວພັນ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການລາຍການທີ່ກ່ຽວພັນ

4.3 ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

4.3.1 ໄລຍະຫົກເດືອນຕົ້ນປີ 2026, ສະພາບໍລິຫານໄດ້ຈັດກອງປະຊຸມທັງໝົດ 5 ຄັ້ງ ເພື່ອໄດ້ພິຈາລະນາ ແລະ ຮັບຮອງເອົາ 13 ວາລະ ເຊັ່ນ: ບົດລາຍງານການດຳເນີນງານປະຈຳປີ 2025 ແລະ ບົດລາຍງານການກວດສອບທາງການເງິນ ເປັນຕົ້ນ.

4.3.2 ໄດ້ດຳເນີນການກວດສອບ ການສະເໜີຊື່ຜູ້ທີ່ຈະມາປ່ຽນແທນ ຕຳແໜ່ງເລຂານຸການສະພາບໍລິຫານ ແລະ ຮອງຜູ້ອຳນວຍການ ຕາມລະບຽບການຄຸ້ມຄອງທີ່ກ່ຽວຂ້ອງຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ພ້ອມທັງໄດ້ສ້າງບົດລາຍງານການກວດສອບສະເໜີຕໍ່ສະພາບໍລິຫານເພື່ອພິຈາລະນາ, ເຊິ່ງໄດ້ສະໜອງຂໍ້ມູນພື້ນຖານໃຫ້ສະພາບໍລິຫານເພື່ອການຕັດສິນໃຈ.

4.3.3 ໃນໄລຍະຫົກເດືອນຕົ້ນປີ 2026, ຄະນະກຳມະການກວດສອບ ໄດ້ຈັດກອງປະຊຸມຂຶ້ນ 2 ຄັ້ງ, ເພື່ອທົບທວນ ບົດລາຍງານການເງິນປະຈຳປີ 2025 ຂອງບໍລິສັດ, ບົດລາຍງານການເງິນໄຕມາດທີ 1 ປະຈຳປີ 2026, ເພື່ອຮັບປະກັນ ຄວາມຖືກຕ້ອງໃນການເປີດເຜີຍຂໍ້ມູນບົດລາຍງານການເງິນຂອງບໍລິສັດ.

4.3.3 ຄະນະກຳມະການລາຍການທີ່ກ່ຽວພັນຂອງບໍລິສັດ ໄດ້ປະຊຸມ 1 ຄັ້ງ, ເພື່ອທົບທວນສອງລາຍການທີ່ກ່ຽວພັນຂອງບໍລິສັດ,ໃຫ້ຄວາມຄິດເຫັນອ້າງອີງແກ່ຜູ້ຕັດສິນໃຈ ໃນການພິຈາລະນາ ແລະ ອະນຸມັດລາຍການທີ່ກ່ຽວພັນດັ່ງກ່າວ.

5. ຄວາມຮັບຜິດຊອບໃນສັງຄົມ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ໄດ້ຊຳລະອາກອນຢ່າງຖືກຕ້ອງຕາມກົດໝາຍ,ໃນໄລຍະຫົກເດືອນຕົ້ນປີ 2026 ໄດ້ມອບອາກອນທັງໝົດ 169,927,690,00 ກີບ, ດັ່ງລາຍລະອຽດລຸ່ມນີ້:

ລຳດັບ	ລາຍການ	ຈຳນວນເງິນ(ສິບພັນກີບ)	
		ໄລຍະຫົກເດືອນຕົ້ນປີ 2026	ໄລຍະຫົກເດືອນຕົ້ນປີ 2025
1	ອາກອນກຳໄລ	-	-
2	ອາກອນມູນຄ່າເພີ່ມ	14,385.66	117,240.72
3	ອາກອນລາຍໄດ້	2,542.03	2,388.99
4	ອາກອນອື່ນໆ	-	-
ລວມ		16,927.69	7,382.40

6.ວຽກງານຮັກສາຄວາມສຳພັນກັບນັກລົງທຶນ

ໃນວັນທີ 21 ພຶດສະພາ 2025,ວຽງຈັນເຊັນເຕີ ໄດ້ເຂົ້າຮ່ວມກອງປະຊຸມພົບປະນັກລົງທຶນ ທີ່ຕະຫຼາດຫຼັກຊັບລາວ ຈັດຂຶ້ນໂດຍສຸມໃສ່ການນຳສະເໜີພາບລວມຂອງບໍລິສັດ, ທຸລະກິດຕົ້ນຕໍ, ໂຄງປະກອບການຈັດຕັ້ງ, ຍຸດທະສາດການພັດທະນາແລະແຜນທຸລະກິດປີ 2026, ຄວາມຮັບຜິດຊອບຕໍ່ສັງຄົມ ແລະ ຂໍ້ມູນທາງດ້ານການເງິນທີ່ສຳຄັນຂອງບໍລິສັດໃນປີ 2026 ເປັນຕົ້ນ.

7. ລາຍການທີ່ກ່ຽວພັນ

ໃນໄລຍະຫົກເດືອນຕົ້ນປີ 2026, ບໍລິສັດມີລາຍການທີ່ກ່ຽວພັນ 1 ລາຍການດັ່ງຕໍ່ໄປນີ້:

ການວ່າຈ້າງ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄຽງຈອນໜອງຈັນຕອນເໜືອ ຈຳກັດ ເປັນຜູ້ຮັບຜິດຊອບການການບໍລິການຄຸ້ມຄອງ ແລະ ບໍລິຫານຊັບສິນ, ລາຍການດັ່ງກ່າວແມ່ນຢູ່ໃນຂອບເຂດສິດອຳນາດການຕັດສິນໃຈຂອງສະພາບໍລິຫານ, ຫຼັງຈາກຜ່ານການກວດກາ ໂດຍຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ ຂອງບໍລິສັດແລ້ວ, ໄດ້ລາຍງານໃຫ້ສະພາບໍລິຫານຂອງບໍລິສັດທົບທວນ ແລະ ອະນຸມັດໃນວັນທີ 4 ກຸມພາ 2026. ມະຕິດັ່ງກ່າວໄດ້ເປີດເຜີຍຢູ່ໃນເວັບໄຊ

ຂອງຕະຫຼາດຫຼັກຊັບລາວ.

8. ນະໂຍບາຍການປັນຜົນ

ມາດຕາ 5 ຂອງກົດລະບຽບຂອງບໍລິສັດ ໄດ້ກຳນົດໄວ້ວ່າ:

ກ່ຽວກັບກຳໄລຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ໝາຍເຖິງ ກຳໄລສຸດທິຂອງບໍລິສັດ ຫຼັງຈາກຫັກຄ່າໃຊ້ຈ່າຍ, ຄ່າເສື່ອມລາຄາ, ການຊຳລະໜີ້ສິນ ແລະ ການມອບອຳນາດໃຫ້ລັດຖະບານ, ຫຼັງຈາກຫັກຄັງສຳຮອງຕ່າງໆ ຕາມທີ່ກົດໝາຍ ແລະ ກົດລະບຽບນີ້ກຳນົດໄວ້, ບໍລິສັດອາດຈະເກັບກຳໄລສຸດທິໄວ້ ເພື່ອບັນລຸເປົ້າໝາຍໃນອະນາຄົດຂອງບໍລິສັດ. ກ່ຽວກັບການແບ່ງຜົນກຳໄລ ມີຂໍ້ກຳໜົດດັ່ງນີ້:

- ຜູ້ຖືຮຸ້ນຈະໄດ້ຮັບສ່ວນແບ່ງກຳໄລ ຕາມອັດຕາສ່ວນການຖືຮຸ້ນ ຫຼື ການລົງທຶນຂອງຕົນ.
- ແຜນການແບ່ງຜົນກຳໄລ ຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນກ່ອນ.
- ໃນກໍລະນີທີ່ບໍລິສັດຂາດທຶນຢ່າງຕໍ່ເນື່ອງ ຈະບໍ່ມີການປັນຜົນ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

Zeng ChunLin